ວາລະສານ

# ກະສິກຳ ແລະ ປ່າໄມ້

ປະຈຳ ອາທິດວັນທີ 30 ມັງກອນ ຫາ 03 ກຸມພາ 2023




ຫ້ອງການກະຊວງກະສິກຳ ແລະ ປ່າໄມ້




# ເງື່ອນໄຂສຸຂານາໄມພືດສຳລັບ ການສົ່ງອອກໝາກກ້ວຍ ໄປ ສປ ຈີນ

ໃນເດືອນທັນວາປີ 2022 ຜ່ານມານີ້ກະຊວງ ກະສິກຳ ແລະ ປ່າໄມ້ ຮ່ວມກັບຝ່າຍຈີນ ຈັດພິທີເປີດຖ້ຽວລົດໄຟຄັ້ງປະຖົມມະເລີກເພື່ອຂົນສົ່ງໝາກກ້ວຍ ຈາກ ສປປ ລາວ ໄປ ສປ ຈີນ 500 ໂຕນ, ເຊິ່ງຫຼາຍຄົນ ໃນສັງຄົມຄົງຍັງບໍ່ຮູ້ວ່າການສົ່ງອອກກ້ວຍນັ້ນຕ້ອງຜ່ານເງື່ອນໄຂໃດແດ່ ໂດຍກົມປູກຝັງກະຊວງ ກະສິກຳ ແລະ ປ່າໄມ້ ໄດ້ອອກຄຳແນະນຳກ່ຽວກັບເງື່ອນໄຂສຸຂານາໄມພືດສຳລັບການ ສົ່ງອອກໝາກກ້ວຍ ສະບັບເລກທີ 5603/ກປຝ, ລົງວັນທີ 20 ທັນວາ 2022 ເຊິ່ງເງື່ອນໄຂທີ່ລະບຸໄວ້ໃນ ຄຳແນະນຳນີ້ມີທັງໝົດ 07 ຂໍ້ສຳຄັນດ້ວຍກັນ.

ໃນສະບັບນີ້ ວາລະສານກະສິກຳ ແລະ ປ່າ ໄມ້ ຈະໄດ້ນຳສະເໜີ ກ່ຽວກັບ ເງື່ອນໄຂ ຂໍ້ທີ່ 1-4 ຊຶ່ງນອນໃນ 7 ເງື່ອນໄຂດ້ານສຸຂານາໄມພືດໃນການສົ່ງອອກໝາກກ້ວຍ ຈາກ ສປປ ລາວ ໄປ ສປ ຈີນ ເຊິ່ງໄດ້ກຳນົດກ່ຽວກັບຊະນິດໝາກກ້ວຍ, ສັດຕູພືດກັກກັນ, ການຈັດການສວນປູກ ແລະ ໂຮງເຮືອນຫຸ້ມຫໍ່ບັນຈຸ ເຊິ່ງມີເນື້ອໃນດັ່ງຕໍ່ໄປນີ້:

**ຊະນິດໝາກກ້ວຍ**: ທີ່ຈະສາມາດສົ່ງອອກ ຕ້ອງເປັນຊະນິດພັນທີ່ມີຊື່ວິທະຍາສາດ Musasusp-tentum L. ຊື່ສາມັນເປັນພາສາອັງກິດວ່າ banana ເຊິ່ງເປັນກ້ວຍທີ່ມີອາຍຸ 10-11 ອາທິດ ນັບຈາກ ມື້ອອກ ແລະ ເກັບກ່ຽວໃນເວລາທີ່ກ້ວຍຍັງບໍ່ທັນສຸກ, ໝາກກ້ວຍສຸກທຸກຊະນິດແມ່ນບໍ່ສາມາດສົ່ງອອກໄດ້.

**ສັດຕູພືດກັກກັນ**: ໝາກກ້ວຍທີ່ຈະສົ່ງອອກ ຈາກ ສປປ ລາວ ໄປ ສປ ຈີນ ຕ້ອງບໍ່ປົນເປື້ອນ ກິ່ງງ່າ, ໃບ ແລະ ດິນ ແລະ ຕ້ອງບໍ່ຕິດແປດສັດຕູພືດກັກກັນ ທີ່ຝ່າຍຈີນ ກຳນົດໄວ້ 11 ຊະນິດຄື: 1. ແມງມີ່ຂາວກຽວ; 2. ເພ້ຍຫອຍສີເຫຼືອງ; 3. ແມງວັນທອງໝາກໄມ້; 4. ແມງວັນທອງໝາກຫຸ່ງ; 5. ແມງວັນທອງໝາກເຂືອ; 6. ເພ້ຍແປ້ງໝາກນັດ; 7. ເພ້ຍແປ້ງປາຊີຟິກ; 8. ບົ້ງສີບົວ; 9. ເພ້ຍແປ້ງໝາກມ່ວງ; 10. ເພ້ຍຫອຍດາວ; 11. ພະຍາດຫ່ຽວ.

**ສວນປູກໝາກກ້ວຍ**: ສວນປູກກ້ວຍທີ່ຈະສົ່ງອອກໄປ ສປ ຈີນ ນັ້ນຕ້ອງມີມາດຕະການເຝົ້າ



ລະວັງສັດຕູພືດ ກັກກັນດັ່ງທີ່ໄດ້ກ່າວມາກ່ອນໜ້ານີ້ ແລະ ມີການຈັດການສວນແບບປະສົມປະສານດັ່ງນີ້:

1. ການຈັດການສວນປູກຕ້ອງປະຕິບັດຕາມເງື່ອນໄຂມາດຕະຖານກະສິກໍາທີ່ດີ GAP ກ່ຽວກັບຄວາມປອດໄພຂອງຜົນຜະລິດ ຄື: ຂໍ້ກໍານົດກ່ຽວກັບປະຫວັດ ແລະ ການຈັດການພື້ນທີ່, ການນໍາໃຊ້ແນວພັນພືດ, ການນໍາໃຊ້ຝຸ່ນ ແລະ ສານປັບປຸງດິນ, ການນໍາໃຊ້ນໍ້າ, ການນໍາໃຊ້ສານເຄມີ, ເກັບກ່ຽວ ແລະ ການຈັດການຜົນຜະລິດ, ເຄຫະສະຖານ, ການທໍາຄວາມສະອາດ ແລະ ອານາໄມ, ການຄວບຄຸມສັດລ້ຽງ ແລະ ສັດຕູພືດ, ການອານາໄມສ່ວນບຸກຄົນ, ການຮັກສາຄຸນນະພາບຜົນຜະລິດ, ການເກັບຮັກສາ ແລະ ການຂົນສົ່ງ, ການກວດກາຍ້ອນຫຼັງ ແລະ ການຮຽກຄືນ, ການຝຶກອົບຮົມ, ການບັນທຶກເອກະສານ ແລະ ການທົບທວນຄືນ;

2. ການຈັດການສັດຕູພືດກັກກັນ: ໃນສວນປູກຕ້ອງມີການຈັດການສັດຕູພືດແບບປະສົມປະ ສານ IPM ເຊັ່ນ: ການໃຊ້ກັບດັກເຟລາໂມນ ແລະ ກາວເຫຼືອງ, ການອານາໄມສວນປູກ ແລະ ຮັກສາຄວາມສະອາດ, ການເກັບທໍາລາຍໝາກທີ່ລົ່ນຖິ້ມ, ການຕັດແຕ່ງກິ່ງງ່າ ແລະ ອະນຸລັກແມງໄມ້ທີ່ເປັນປະໂຫຍດ, ຖ້າພົບເຫັນສັດຕູພືດ ຄວນນໍາໃຊ້ວິທີກາຍະພາບໂດຍການເກັບທໍາລາຍແມງໄມ້ສັດຕູພືດຖິ້ມ ແລະ ນໍາໃຊ້ວິທີການອື່ນທີ່ເໝາະສົມ;

3. ຜູ້ປະກອບການຕ້ອງມີການບັນທຶກລະອຽດກ່ຽວກັບ ການຕິດຕາມ ແລະ ການຈັດການສັດຕູພືດເຊັ່ນ: ຊື່ສານເຄມີ, ລະດູການນໍາໃຊ້, ສານອອກລິດ, ປະລິມານນໍາໃຊ້. ຈໍານວນຄັ້ງນໍາໃຊ້ ແລະ ຂໍ້ມູນອື່ນໆທີ່ກ່ຽວຂ້ອງ. ການບັນທຶກເອກະສານຕ້ອງເກັບຮັກສາໄວ້ເປັນຢ່າງດີ ແລະ ໃຫ້ມີພ້ອມໃນເວລາກວດກາຂອງເຈົ້າໜ້າທີ່.

4. ສະຖານທີ່ປະກອບການຜະລິດຕ້ອງມີມາດຕະການປ້ອງກັນ ແລະ ຄວບຄຸມການຕິດແປດຂອງພະຍາດໂຄວິດ-19 ໃສ່ຜະລິດຕະພັນ ແລະ ຜູ້ປະຕິບັດໜ້າທີ່.



**ໂຮງເຮືອນຫຸ້ມຫໍ່ບັນຈຸໝາກກ້ວຍ**: ກ່ອນຂະບວນການຂົນສົ່ງການຈັດການພາຍໃນໂຮງເຮືອຫຸ້ມຫໍ່ບັນຈຸ ຕ້ອງປະຕິບັດ ດັ່ງນີ້:

1.ການຫຸ້ມຫໍ່ບັນຈຸຕ້ອງຄັດເລືອກເອົາໝາກທີ່ສົມບູນປາສະຈາກໝາກເໜົ່າ, ພະຍາດ, ແມງ ໄມ້, ໃບ ແລະ ຊິ້ນສ່ວນເສດເຫຼືອອື່ນໆ ແລະ ລ້າງໃຫ້ສະອາດ ພ້ອມທັງກຳຈັດເຊື້ອ ພະຍາດ ດ້ວຍການນຳໃຊ້ຢາຂ້າເຊື້ອຮາຫຼັງການເກັບກ່ຽວ.

2.ບໍ່ປົນເປື້ອນສິ່ງທີ່ມີຊີວິດ, ດິນ, ສິ່ງເສດເຫຼືອຂອງພືດ ແລະ ສານທີ່ເປັນອັນຕະລາຍເຊັ່ນ: ຢາປາບສັດຕູພືດ, ໂລຫະໜັກ, ຈຸລິນຊີ ແລະ ສານພິດຕົກຄ້າງອື່ນ ຕ້ອງບໍ່ເກີນລະດັບການ ຕົກຄ້າງສູງສຸດ ທີ່ກຳນົດໄວ້ລະບຽບ ແລະ ກົດໝາຍຂອງ ສປ ຈີນ.

3.ວັດສະດຸຫຸ້ມຫໍ່ບັນຈຸຕ້ອງສະອາດ, ບໍ່ເຄີຍນຳໃຊ້ມາກ່ອນ ແລະ ຕ້ອງສອດຄ່ອງກັບເງື່ອນໄຂ ສຸຂານາໄມພືດທີ່ ສປ ຈີນກຳນົດ.

4.ແຕ່ລະພາຊະນະຫຸ້ມຫໍ່ບັນຈຸ ຕ້ອງພິມ ຫຼື ຕິດສະຫຼາກຂະໜາດຕົວອັກສອນທີ່ຈະແຈ້ງໃສ່ ດ້ານຂ້າງ ແລະ ດ້ານເທິງ. ເນື້ອໃນສະຫຼາກຕ້ອງຂຽນເປັນພາສາອັງກິດໂດຍລະບຸແຈ້ງປະເທດສົ່ງອອກພ້ອມທັງລະບຸແຈ້ງຂໍ້ມູນຊື່ບໍລິສັດສົ່ງອອກ, ຊື່ແນວພັນ, ບະຫັດສວນປູກ, ລະ ຫັດໂຮງເຮືອນຫຸ້ມຫໍ່ ແລະ ວັນເດືອນປີຫຸ້ມຫໍ່ ຕາມຮູບແບບ ແລະ ຂະໜາດດັ່ງນີ້:

- Export to the People's Republic of China.......................................................
- Name of the exporting company........
- Fruit type.........................................
- Orchard register number.....................
- Packing house register number............
- Packing date.........................................

5.ພາຍຫຼັງຫຸ້ມຫໍ່ບັນຈຸຜົນຜະລິດສຳເລັດໃຫ້ແຍກເກັບຮັກສາໄວ້ໃນສາງເຢັນ ທີ່ສະຖານທີ່ສະອາດເພື່ອປ້ອງກັນຕິດແປດຂອງສັດຕູພືດ ແລະການປົນເປື້ອນ.

ຂໍ້ມູນອ້າງອີງຈາກ: ຄຳແນະນຳ ກ່ຽວກັບເງື່ອນໄຂສຸຂານາໄມພືດ ສາລັບການສົ່ງອອກໝາກກ້ວຍ ຈາກ ສປປ ລາວ ໄປ ສປ ຈີນ ,ເລກທີ 2603/ກປຝ, ລົງວັນທີ 20 ທັນວາ 2023.

ຄະນະຮັບຜິດຊອບ:
ທ່ານ ສີປະໄພ ໄຊສົງຄາມ
ທານ ນ. ສຸດາຄຳ ພົມມະສອນ

ບັນນາທິການ:
ທ່ານ ກິດຊະນະ ພົມມະຈັນ
ທ່ານ ໂຊລາ ສົມມະລາວົງ
ທານ ນ. ທອງພຸດ ວົງພະຈັນ

ຈັດໜ້າອອກແບບໂດຍ:
ທານ ນ. ສີອໍານອນ ໄຊຍະລາດ

ຕິດຕໍ່ ແລະ ລົງໂຄສະນາໄດ້ທີ່: ພະແນກໂຄສະນາ ແລະ ຂ່າວສານ, ຫ້ອງການກະຊວງ 021 410154;
website: www.maf.gov.la;
Facebook: ຂາວສານກະສິກໍາ, ປ່າໄມ້ ແລະ ພັດທະນາຊົນນະບົດ;
Youtube: ລາຍການກະສິກໍາ;ແລະ ປາໄມ;